ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

2390

ເລກທີ................/ຫອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ...31 DEC 2020

## ແຈ້ງການ

**ເຖິງ:** - ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ;

- ຜູ້ປະກອບການສົ່ງອອກໄປ ສປ ຈີນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

**ເລື່ອງ:** ການຈັດຕັ້ງປະຕິບັດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ (GSP 97%) ແລະ ການເຂົ້າເປັນສະມາຊິກສົມບູນຂອງປະເທດມົງໂກລີ ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA).

- ອີງຕາມ ສານແລກປ່ຽນສິດທິພິເສດໃນການຍົກເວັ້ນອັດຕາພາສີ 97% ຂອງ ສປ ຈີນ ໃຫ້ແກ່ ສປປ ລາວ ສະບັບລົງວັນທີ 14 ຕຸລາ 2020;
- ອີງຕາມ ສະໂນດນຳສົ່ງຈາກ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0586/ກນຄຕ.ສຄ, ລົງວັນທີ 23 ທັນວາ 2020;
- ອີງຕາມ ໜັງສືແຈ້ງຈາກອົງການ UN ESCAP ສະບັບເລກທີ OES/B/9, ລົງວັນທີ 29 ຕຸລາ 2020;
- ອີງຕາມ ແຈ້ງການຈາກ ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2388/ຫອຄ.ກນຄຕ, ລົງວັນທີ 30 ທັນວາ 2020.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບ ກ່ຽວກັບ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ທີ່ໄດ້ຍົກເວັ້ນອັດຕາພາສີ 97% ແກ່ບັນດາປະເທດດ້ອຍພັດທະນາ (GSP 97%) ແລະ ການເຂົ້າເປັນສະມາຊິກສົມບູນຂອງປະເທດມົງໂກລີ ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA):

1. ການຈັດຕັ້ງປະຕິບັດແບບພິມ (Certificate of Origin Special Preference Treatment) ພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ທີ່ໄດ້ຍົກເວັ້ນອັດຕາພາສີ 97% ໃຫ້ແກ່ບັນດາປະເທດທີ່ດ້ອຍພັດທະນາ ໂດຍເລີ່ມຈັດຕັ້ງປະຕິບັດແບບພິມດັ່ງກ່າວ ນັບຕັ້ງແຕ່ວັນທີ **01 ມັງກອນ 2021** ເປັນຕົ້ນໄປ. ສາມາດຂໍແບບພິມໄດ້ທີ່ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ທີ່ໄດ້ຮັບການມອບໝາຍຈາກ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ;

2. ການເຂົ້າເປັນສະມາຊິກສົມບູນຂອງປະເທດມົງໂກລີ ພາຍໃຕ້ຂອບສັນຍາການຄ້າອາຊີ-ປາຊີຟິກ (APTA), ໃນວັນທີ 29 ກັນຍາ 2020 ໂດຍໄດ້ສຳເລັດການຍື່ນສານຮັບຮອງການເຂົ້າເປັນສະມາຊິກ ສັນຍາການຄ້າອາຊີ - ປາຊີຟິກ ຕໍ່ອົງການ UN ESCAP ປະຈຳບາງກອກ. ປະເທດມົງໂກລີ ຈະເລີ່ມຈັດຕັ້ງປະຕິບັດການຫຼຸດຜ່ອນອັດຕາພາສີສິນຄ້າ ພາຍໃຕ້ສັນຍາການຄ້າອາຊີ-ປາຊີຟິກ ກັບບັນດາປະເທດສະມາຊິກ APTA ລວມທັງ ສປປ ລາວ ໃນວັນທີ **01 ມັງກອນ 2021** ເປັນຕົ້ນໄປ.

ສຳລັບລາຍລະອຽດເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ເວັບໄຊສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ: www.laotradeportal.gov.la ຫຼື ສາມາດຕິດຕໍ່ພົວພັນ ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ, ໂທ: +856 21 450 255, ອີເມວ: roodivision.laopdr@gmail.com.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າຫ້ອງການ**

ນ. ບານສະຕິ ເທບພະວົງ